ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 01 /ທຫລ

ນະຄອນຫລວງວຽງຈັນ, ວັນທີ 23 OCT 2012

# ລະບຽບ

## ກ່ຽວກັບການຖອກທຶນຈົດທະບຽນ ແລະ ການນຳໃຊ້ທຶນຈົດທະບຽນ

## ຂອງສະຖາບັນການເງິນ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999.
- ອີງຕາມດຳລັດວ່າດ້ວຍໂຮງຊວດຈຳ ສະບັບເລກທີ 10/ນຍ ລົງວັນທີ 02 ກຸມພາ 2002 ແລະ ບົດແນະນຳຈັດຕັ້ງປະຕິບັດດຳລັດວ່າດ້ວຍໂຮງຊວດຈຳ ສະບັບ ເລກທີ 01/ທຫລ ລົງວັນທີ 09 ມັງກອນ 2003.
- ອີງຕາມດຳລັດວ່າດ້ວຍເຊົ່າສິນເຊື່ອ ສະບັບເລກທີ 11/ ນຍ ລົງວັນທີ 08 ກຸມພາ 1999.
- ອີງຕາມຂໍ້ກຳນົດວ່າດ້ວຍການຄຸ້ມຄອງສະຖາບັນການເງິນຈຸລະພາກ ເລກທີ 02, 03 ແລະ 04 / ທຫລ ລົງວັນທີ 20 ມິຖຸນາ 2008.
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງສະຖາບັນການເງິນ

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 01. ຈຸດປະສົງ**

ລະບຽບສະບັບນີ້ ກຳນົດລະບຽບຫລັກການ ກ່ຽວກັບການຖອກທຶນຈົດທະບຽນ ແລະ ການນຳໃຊ້ທຶນຈົດທະບຽນ ຂອງສະຖາບັນການເງິນ ເພື່ອຮັບປະກັນປະສິດທິຜົນໃນການດຳເນີນງານ.

**<u>ມາດຕາ 02</u>. ອະທິບາຍຄຳສັບ**

**"ທຶນຈົດທະບຽນ"** ໝາຍເຖິງມູນຄ່າຂອງຮຸ້ນທັງໝົດທີ່ຜູ້ຖືຮຸ້ນໄດ້ປະກອບ ເພື່ອສ້າງຕັ້ງສະຖາບັນການເງິນ ຊຶ່ງລວມເປັນເງິນ ແລະ ວັດຖຸ, ໃນນັ້ນທຶນທີ່ເປັນວັດຖຸບໍ່ໃຫ້ເກີນ 10% ຂອງທຶນຈົດທະບຽນທັງໝົດ.

**<u>ມາດຕາ 03.</u> ການຖອກທຶນຈົດທະບຽນ**

ພາຍຫລັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ສະຖາບັນການເງິນ ຕ້ອງຖອກທຶນຈົດທະບຽນ ເຂົ້າໃນບັນຊີຂອງຕົນທີ່ເປີດໄວ້ຢູ່ ທະນາຄານແຫ່ງ ສປປ ລາວ ຢ່າງຄົບຖ້ວນ. ສຳລັບທຶນທີ່ເປັນວັດຖຸ ຕ້ອງແຈ້ງໃຫ້ ທະນາຄານແຫ່ງ ສປປ ລາວ ຊາບ ເພື່ອກວດກາຕີລາຄາມູນຄ່າ ໃຫ້ເໝາະສົມຕາມມູນຄ່າຕົວຈິງໃນທ້ອງຕະຫລາດ ຕາມລະບຽບການ.

**<u>ມາດຕາ 04</u>. ການນຳໃຊ້ທຶນຈົດທະບຽນ**

ສະຖາບັນການເງິນສາມາດນຳໃຊ້ທຶນຈົດທະບຽນເຂົ້າໃນ ສອງຈຸດປະສົງຄື:

1. ນຳໃຊ້ເຂົ້າໃນການກໍ່ສ້າງສ້ອມແປງສຳນັກງານຫ້ອງການ ແລະ ປະກອບວັດຖຸເຕັກນິກທີ່ຈຳເປັນໃນການເຄື່ອນໄຫວທຸລະກິດຂອງຕົນ ບໍ່ໃຫ້ເກີນ 10%;
2. ນຳໃຊ້ເພື່ອເປັນແຫລ່ງທຶນເຂົ້າໃນການປ່ອຍສິນເຊື່ອໃຫ້ແກ່ລູກຄ້າ.

ການສະເໜີນຳໃຊ້ທຶນຈົດທະບຽນ ຕ້ອງໃຫ້ມີແຜນການນຳໃຊ້ທຶນທີ່ຊັດເຈນ.

**<u>ມາດຕາ 05</u>. ອັດຕາສ່ວນການນຳໃຊ້ທຶນຈົດທະບຽນ**

ໂຮງຊວດຈຳ ສາມາດນຳໃຊ້ທຶນຈົດທະບຽນໄດ້ສູງສຸດບໍ່ເກີນ 90% ຂອງທຶນຈົດທະບຽນ, ສ່ວນທີ່ເຫລືອ 10% ແມ່ນຮັກສາໄວ້ເພື່ອຄ້ຳປະກັນທຶນຈົດທະບຽນ.

ບໍລິສັດເຊົ່າສິນເຊື່ອ ສາມາດນຳໃຊ້ທຶນຈົດທະບຽນໄດ້ສູງສຸດບໍ່ເກີນ 90% ຂອງທຶນຈົດທະບຽນ, ສ່ວນທີ່ເຫລືອ 10% ແມ່ນຮັກສາໄວ້ເພື່ອຄ້ຳປະກັນທຶນຈົດທະບຽນ.

ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ( ສກຈບ ) ທີ່ມີທຶນຈົດທະບຽນຫ້າຮ້ອຍລ້ານກີບຂຶ້ນໄປ ແມ່ນສາມາດນຳໃຊ້ທຶນຈົດທະບຽນໄດ້ສູງສຸດບໍ່ເກີນ 90% ຂອງທຶນຈົດທະບຽນ, ສ່ວນທີ່ເຫລືອ 10% ແມ່ນຮັກສາໄວ້ເພື່ອຄ້ຳປະກັນທຶນຈົດທະບຽນ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ( ສສງ ) ສາມາດນຳໃຊ້ທຶນຈົດທະບຽນໄດ້ 100% ແລະຕ້ອງເຂົ້າເປັນສະມາຊິກກອງທຶນປົກປ້ອງຜູ້ຝາກເງິນ.

ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ( ສກຈຮ ) ສາມາດນຳໃຊ້ທຶນຈົດທະບຽນໄດ້ສູງສຸດບໍ່ເກີນ 75% ຂອງທຶນຈົດທະບຽນ, ສ່ວນທີ່ເຫລືອ 25% ແມ່ນຮັກສາໄວ້ເພື່ອຄ້ຳປະກັນທຶນຈົດທະບຽນ. ກໍລະນີ ສກຈຮ ເປັນສະມາຊິກກອງທຶນປົກປ້ອງຜູ້ຝາກເງິນ ສາມາດນຳໃຊ້ທຶນຈົດທະບຽນໄດ້ 100%.

**<u>ມາດຕາ 06.</u>  ຂັ້ນຕອນການຖອກທຶນຈົດທະບຽນ ແລະ ການຮັກສາເງິນຄ້ຳປະກັນທຶນຈົດທະບຽນ**

1. ສະຖາບັນການເງິນທີ່ໄດ້ຮັບອະນຸຍາດການເຄື່ອນໄຫວ ນັບແຕ່ ເດືອນມິຖຸນາ 2012 ຄືນຫລັງທີ່ຍັງບໍ່ໄດ້ຖອກເງິນຄ້ຳປະກັນທຶນຈົດທະບຽນ ຕ້ອງໄດ້ເອົາເງິນມາຖອກເຂົ້າບັນຊີຂອງຕົນ ທີ່ເປີດໄວ້ຢູ່ ກົມບໍລິການ ທະນາຄານແຫ່ງ ສປປ ລາວ ຕາມອັດຕາສ່ວນທີ່ກຳນົດໄວ້ໃນ ລະບຽບສະບັບນີ້ໃຫ້ສຳເລັດພາຍໃນ 01 ປີ ໂດຍແບ່ງເປັນ 04 ງວດ ນັບແຕ່ມື້ອອກ ລະບຽບສະບັບ ນີ້ເປັນຕົ້ນໄປ;
2. ສຳລັບສະຖາບັນການເງິນທີ່ໄດ້ຮັບອະນຸຍາດການເຄື່ອນໄຫວແລ້ວ ນັບແຕ່ ເດືອນມິຖຸນາ 2012 ເປັນຕົ້ນໄປ ຕ້ອງປະຕິບັດລະບຽບສະບັບນີ້ຢ່າງເຂັ້ມງວດ.

**<u>ມາດຕາ 07</u>. ການລາຍງານ ແລະ ຮັກສາເອກະສານ**

ສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກ ທະນາຄານແຫ່ງ ສປປ ລາວ ຕ້ອງລາຍງານສະພາບການເຄື່ອໄຫວຂອງຕົນ ເປັນປະຈຳແຕ່ເດືອນ, ໄຕມາດ ແລະ ປະຈຳປີ ແລະ ເກັບຮັກສາເອກະສານຢັ້ງຢືນກ່ຽວກັບການນຳໃຊ້ທຶນຈົດທະບຽນໄວ້ຢ່າງຄົບຖ້ວນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການກວດກາຂອງ ທະນາຄານແຫ່ງ ສປປ ລາວ.

**<u>ມາດຕາ 08</u>. ມາດຕະການຕໍ່ຜູ້ລະເມີດ**

ສະຖາບັນການເງິນຫາກລະເມີດລະບຽບສະບັບນີ້ຈະຖືກປະຕິບັດມາດຕະການຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**<u>ມາດຕາ 09</u>.  ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງສະຖາບັນການເງິນ, ບັນດາກົມກ່ຽວຂ້ອງ ທະນາຄານແຫ່ງ ສປປ ລາວ, ທະນາຄານແຫ່ງ ສປປ ລາວ ປະຈຳແຕ່ລະພາກ, ທະນາຄານທີ່ໄດ້ຮັບມອບໝາຍ ແລະ ສະຖາບັນ

ການເງິນທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ ຈາກ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ຈັດຕັ້ງປະຕິບັດລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 10. ຜົນສັກສິດ**

ລະບຽບສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ.**

ສົມພາວ ໄຟສິດ